ข່ົດຂ່າວ

ພິທີລົງນາມ ການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ວ່າດ້ວຍ ການບໍລິການຊຳລະຄ່າບໍລິການຕ່າງໆຜ່ານ ທຄຕລ.



ໃນວັນທີ 06 ກຸມພາ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດໄດ້ຈັດພິທີລົງນາມ ການຮ່ວມມື ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ວ່າດ້ວຍ ການບໍລິການຊຳລະຄ່າບໍລິການຕ່າງໆຜ່ານ ທຄຕລ.

ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ພັນຊະນະ ຄຸນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ແລະ ທ່ານ ຊັດຊະວານ ເພີ່ມສຸກຈາຣຸຊັບ,ກຳມະການຜູ່ຈັດການໃຫຍ່ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອຈຳກັດ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

ທ່ານ ຄຳສຸກ ສູນດາລາ, ຮອງປະທານ ສະພາບໍລິຫານ, ທຄຕລ

ພ້ອມດ້ວຍ ຄະນະອຳນວຍການ, ຄະນະພະແນກ, ຄະນະສູນ, ຄະນະສາຂາ ຂອງ ທຄຕລ ແລະ ຄະນະຜູ້ແທນຈາກ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ກໍ່ໄດ້ເຂົ້າຮ່ວມ.

ສັນຍາວ່າດ້ວຍການບໍລິການຊຳລະຄ່າບໍລິການຜ່ານ ທຄຕລ ທີ່ເຊັນໃນຄັ້ງນີ້ ຈຸດປະສົງຫຼັກແມ່ນການຕົກລົງ ຮ່ວມມືກັນ ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ໃນການອຳນວຍຄວາມສະດວກ ໃຫ້ແກ່ລູກຄ້າ ບໍລິສັດກຸງສີ ບໍລິການ ເຊົ່າສິນເຊື່ອຈຳກັດ ເພື່ອ ສາມາດຊຳລະຄ່າຜ່ອນສິນຄ້າ ຜ່ານຊ່ອງທາງຕ່າງໆຂອງ ທຄຕລ ເຊັ່ນ: ຜ່ານຊ່ອງທາງເຄົາເຕີ້, ຜ່ານຊ່ອງທາງ BCELONE, ຜ່ານຊ່ອງທາງ I-BANK ແລະ ຜ່ານຊ່ອງທາງ ATM.

ນອກຈາກນີ້, ລູກຄ້າຍັງສາມາດ ເລືອກບໍລິການຕັ້ງການຊຳລະເງິນແບບອັດຕະໂນມັດ (Auto-Payment) ເຊິ່ງ Auto-Payment ເປັນບໍລິການຕັດເງິນຈາກບັນຊີຂອງລູກຄ້າຂອງບໍລິສັດທີ່ມີບັນຊີຢູ່ ທຄຕລ ເຂົ້າບັນຊີບໍລິສັດ ເພື່ອຊຳລະ ຄ່າບໍລິການຕ່າງໆ ຕາມການຕົກລົງເຫັນດີ ລະຫວ່າງລູກຄ້າ ແລະ ບໍລິສັດ ໂດຍລູກຄ້າບໍ່ຈຳເປັນ ຕ້ອງເດີນທາງເຂົ້າມາ ດຳເນີນທຸລະກຳ ຢູ່ທະນາຄານ ຫຼື ເດີນທາງໄປຊຳລະເງິນໃຫ້ບໍລິສັດ.

ທ່ານ ພັນຊະນະ ຄຸນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ໄດ້ກ່າວວ່າ: "ການຮ່ວມມືໃນຄັ້ງນີ້ ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ຖືວ່າ ເປັນຂີດໝາຍອັນສຳຄັນຕໍ່ ທຄຕລ ໃນການເພີ່ມຄວາມຫລາກຫລາຍ ດ້ານຊ່ອງທາງບໍລິການໃຫ້ແກ່ລູກຄ້າ ທັງເບື້ອງ ທຄຕລ ແລະ ລູກຄ້າຂອງທາງບໍລິສັດ".

ບໍລິການຊຳລະຄ່າສາທາລະນຸປະໂພກ ຫລື Bill Payment ຜ່ານລະບົບທະນາຄານ ແມ່ນເປັນການບໍລິການ ທີ່ໄດ້ຮັບການຕອບຮັບເປັນຢ່າງດີຈາກສັງຄົມໃນປະຈຸບັນ. ທຄຕລ ໄດ້ເລີ່ມຕົ້ນໃຫ້ບໍລິການ Bill Payment ທຳອິດ ໃນປີ 2009 ຈາກນັ້ນ ທຄຕລ ກໍ່ໄດ້ມີການພັດທະນາຊ່ອງທາງການຊຳລະໃຫ້ຫລາກຫລາຍຂຶ້ນ ແລະ ມີການນຳ ໃຊ້ຊ່ອງທາງຊຳລະແບບ Online ໂດຍສະເພາະແມ່ນຊຳລະຜ່ານ Application BCEL One ຜ່ານໂທລະສັບມືຖື ຊຶ່ງນັບມື້ໄດ້ຮັບຄວາມນິຍົມ ຈາກລູກຄ້າ.

ທຄຕລ ໃນນາມທີ່ເປັນທະນາຄານທຸລະກິດໃນແຖວໜ້າ ຂອງ ສ.ປ.ປ ລາວ, ປະຈຸບັນ ມີ 19 ສາຂາ, 80 ໜ່ວຍບໍລິການ ພ້ອມດ້ວຍມີການນຳໃຊ້ເຕັກໂນໂລຍີ່ເຂົ້າໃນການບໍລິການໃຫ້ ມີຄວາມທັນສະໄໝ.

ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ແມ່ນບໍລິສັດໃນເຄືອ Mitsubishi UFJ Financial Group (MUFG) ຂອງປະເທດຍີ່ປຸ່ນ ເຊິ່ງເປັນກຸ່ມສະຖາບັນການເງິນທີ່ໃຫຍ່ຕິດອັນດັບ 1 ໃນປະເທດຍີ່ປຸ່ນ ແລະ ອັນດັບ 3 ຂອງໂລກ. ກຸ່ມສະຖາບັນການເງິນຂອງ MUFG ໄດ້ເຂົ້າມາດຳເນີນທຸລະກິດໃນ ສປປ ລາວ ຕັ້ງແຕ່ປີ1994 ໃນນາມທະນາຄານ ກຸງສີ ສາຂານະຄອນຫລວງວຽງຈັນ, ປີ2009 ໄດ້ເປີດສາຂາສະຫວັນນະເຂດ ແລະໃນປີ 2014 ໄດ້ສ້າງຕັ້ງ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ.

ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ມີຜະລິດຕະພັນຢູ່ 2 ກຸ່ມຫລັກ ໄວ້ໃຫ້ບໍລິການລູກຄ້າຄື: ກຸງສີ ໂອໂຕ: ໃຫ້ບໍລິການ ຜ່ອນລົດໃຫຍ່ ແລະ ກຸງສີ ເຟີດຊ້ອຍ: ໃຫ້ບໍລິການຜ່ອນຄຳ, ມືຖືສະມາດໂຟນ, ເຄື່ອງໃຊ້ໄຟຟ້າໃນຄົວເຮືອນ. ຈຸດປະສົງຫລັກຂອງການດຳເນີນທຸລະກິດໃນ ສປປ ລາວຂອງ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ແມ່ນເພື່ອປະກອບສ່ວນ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວໃຫ້ດີຂຶ້ນ ຜ່ານການໃຫ້ບໍລິການດ້ານການເງິນ ທີ່ດີທີ່ສຸດ ໃນອັດຕາດອກເບ້ຍ ຍຸດຕິທຳ ຕາມວິໄສທັດ ແລະ ພັນທະກິດຂອງບໍລິສັດ.